# ບົດທີ 1

## ປຽບທຽບໜັງສືຂ່າວປະເສີດ 3 ເຫຼັ້ມແລກ

ທ່ານແປກປະຫຼາດໃຈວ່າເປັນຫຍັງ ໃນພະຄຳພີໃຫມ່ຈຶ່ງມີຫນັງສືຂ່າວປະເສີດເລື່ອງຂອງ ພະເຢຊູຄຣິດ ເຖິງ 4 ເຫຼັ້ມ ແທນທີ່ຈະມີພຽງເຫຼັ້ມດຽວ? ຮູບແຕ້ມທັງ 4 ທີ່ຢູ່ຂ້າງລຸ່ມນີ້ອາດຈະຊ່ວຍໃຫ້ທ່ານພົບເຫດຜົນທີ່ວ່າ ເປັນຫຍັງໃນພະຄຳພີໃຫມ່ຈຶ່ງມີຫນັງສືຂ່າວປະເສີດເລື່ອງຂອງພະເຢຊູຄຣິດເຖິງ 4 ເຫຼັ້ມ!



ຮູບແຕ້ມທັງ 4 ນີ້ແມ່ນຮູບຂອງເຫດການດຽວກັນ ແຕ່ໄດ້ຖືກແຕ້ມຂຶ້ນໂດຍນັກແຕ້ມ 4 ຄົນ ຊຶ່ງແຕ່ລະຮູບໄດ້ບອກເຖິງສ່ວນຫນຶ່ງຂອງເຫດການ ແຕ່ບໍ່ມີຮູບໃດທີ່ບອກເຖິງເຫດການຄົບຖ້ວນທັງຫມົດ.



ສະນັ້ນເພື່ອຈະເຫັນເຫດການທັງໝົດໄດ້ຢ່າງຄົບຖ້ວນພວກເຮົາຕ້ອງຮວມຮູບທັງ 4 ນີ້ເຂົ້າກັນ ແລະຮູບທີ່ທ່ານເຫັນຢູ່ຂ້າງ ລຸ່ມນັ້ນເປັນຮູບທີ່ຂ້າພະເຈົ້າໄດ້ຮວມຮູບທັງ 4 ເຂົ້າກັນ. ດຽວນີ້ພວກ ເຮົາກໍສາມາດເຫັນເຫດການທັງໝົດໄດ້ຢ່າງຄົບຖ້ວນໃນຮູບດຽວ. ໃນທຳນອງດຽວກັນພວກເຮົາ ສາມາດເຂົ້າໃຈເຖິງຊີວິດແລະການປະກາດຂອງພະເຢຊູຄຣິດໄດ້ຢ່າງລະອຽດໂດຍການຮວມຕອນ ຕ່າງໆ ໃນໜັງສືຂ່າວປະເສີດເລື່ອງຂອງພະເຢຊູຄຣິດທັງ 4 ເຫຼັ້ມທີ່ມີເນື້ອໃນອັນດຽວກັນ, ແລ້ວ ປຽບທຽບເນື້ອໃນຂອງຕອນນັ້ນເພື່ອພວກເຮົາຈະສາມາດເຂົ້າໃຈເລື່ອງທັງໝົດໄດ້ຢ່າງລະອຽດ ວິ ທີນີ້ເອີ້ນວ່າ“ວິທີປຽບທຽບ”.

** ໃນບົດຮຽນນີ້ທ່ານຈະໄດ້ຮຽນການໃຊ້ວິທີປຽບທຽບເຂົ້າໃນການສຶກສາໜັງສືຂ່າວປະເສີດເລື່ອງ ຂອງພະເຢຊູຄຣິດ ທັງ 4 ເຫຼັ້ມ ທ່ານພ້ອມທີ່ຈະເລີ້ມຕົ້ນການຮຽນແລ້ວບໍ? ກ່ອນຈະເລີ້ມຕົ້ນສຶກສາ ຂໍໃຫ້ທ່ານກົ້ມຫົວຫຼັບຕາອ້ອນວອນຕໍ່ພະເຈົ້າ!*

**1** ໃນເຫຼັ້ມທີ I ຂອງຫຼັກສູດນີ້ ພວກເຮົາໄດ້ສຶກສາກ່ຽວກັບໄລຍະເລີ້ມຕົ້ນໃນຊີວິດຂອງພະເຢຊູຄ ຣິດ ຊຶ່ງພວກເຮົາເອີ້ນວ່າ “ສະໄໝໄວເດັກຂອງພະອົງ” ສ່ວນໃນເຫຼັ້ມທີ II ນີ້ພວກເຮົາຈະສຶກ ສາກ່ຽວສະໄໝທີສອງໃນຊີວິດຂອງພະອົງຊຶ່ງພວກ ເຮົາເອີ້ນວ່າ “ສະໄໝປີທີ່ພະອົງຕຽມຕົວ ປ່າວປະກາດ”. ສະໄໝທີສອງໃນຊີວິດຂອງພະອົງ ຄືສະໄໝໃດ? ________________

**2** ໃນບົດຮຽນບົດທຳອິດນີ້ພວກເຮົາຈະທວນຄືນການແນະນຳຕົວແລະໄວເດັກຂອງພະອົງ. ກ່ອນ ອື່ນຂໍໃຫ້ທ່ານໄດ້ຕອບຄຳຖາມຕໍ່ໄປນີ້:

ກ. ໃນພະທຳມັດທາຍ ບົດ 1 ໄດ້ກ່າວເຖິງຫຍັງ? ການແນະ ______________________

ຂ. ໃນພະທຳມັດທາຍ ບົດ 2 ໄດ້ກ່າວເຖິງຫຍັງ? ສະໄໝໄວ ____________________

ຄ. ໃນພະທຳມັດທາຍ ບົດ 3 ແລະ ບົດ 4 ໄດ້ກ່າວເຖິງຫຍັງ? ສະໄໝ ______________

**3** ໃນເຫຼັ້ມທີ I ຂອງຫຼັກສູດນີ້ພວກເຮົາໄດ້ສຶກສາ 3 ວິທີທີ່ເປັນພື້ນຖານຂອງການສຶກສາພະຄຳພີ, 3 ວິທີນັ້ນຮວມມີ

ກ. ວິທີ ______________________________________________________

ຂ. ວິທີ ______________________________________________________

ຄ. ວິທີນຳ ____________________________________________________

ຕອບ:

**1** *ສະໄໝພະອົງຕຽມຕົວປ່າວປະກາດ*

**2** *ກ. ນຳຕົວ ຂ. ໄວເດັກ ຄ. ຕຽມຕົວໃນການປ່າວປະກາດຂອງພະເຢຊູ*

**3** *ກ. ສັງເກດ ຂ. ອະທິບາຍ ຄ. ມາໃຊ້ໃນຊີວິດຂອງຕົນ*

**4** ເພື່ອຈະເຂົ້າໃຈເຖິງຊີວິດຂອງພະເຢຊູຄຣິດຢ່າງລະອຽດ ພວກເຮົາຈຳເປັນຕ້ອງສຶກສາໜັງສືຂ່າວປະເສີດເລື່ອງຂອງພະ ເຢຊູຄຣິດ ທັງ 4 ເຫຼັ້ມໄປພ້ອມໆ ກັນ ຊຶ່ງພວກເຮົາສາມາດເຮັດໄດ້ຢ່າງນີ້ໂດຍການໃຊ້ "ວິທີປຽບທຽບ". (ຈົ່ງຕື່ມຄວາມທີ່ຂາດ) ພວກເຮົາສາມາດສຶກສາໜັງສືຂ່າວປະເສີດເລື່ອງຂອງພະເຢຊູຄຣິດ ທັງ 4ເຫຼັ້ມໄປພ້ອມໆ ກັນໂດຍໃຊ້ວິທີ ____________ ເຂົ້າໃນການສຶກສາ.

**5** ຈົ່ງຕື່ມຄວາມທີ່ຂາດໃສ່ບ່ອນວ່າງໃນປະໂຫຍກຕໍ່ໄປນີ້: ເພື່ອຈະເຂົ້າໃຈເຖິງເລື່ອງພະເຢຊູຄຣິດຢ່າງລະອຽດ ພວກເຮົາຕ້ອງໃຊ້ວິທີ ____________ ໃນການສຶກສາພະຄຳພີ ແລະພວກເຮົາຈຳເປັນຕ້ອງສຶກສາໜັງສືຂ່າວປະເສີດເລື່ອງຂອງພະເຢຊູຄຣິດ ທັງ _________ ເຫຼັ້ມໄປພ້ອມໆ ກັນ.

**6** ວິທີປຽບທຽບເປັນວິທີທີ່ເໝາະສົມໃນການສຶກສາຂໍ້ຄວາມ ຫຼືເລື່ອງໃດເລື່ອງໜຶ່ງໃນພະຄຳພີ ແລະຍິ່ງໄປກວ່ານັ້ນອີກ ວິທີປຽບທຽບຍັງເປັນວິທີທີ່ດີໃນການສຶກສາສະໄໝໃດສະໄໝໜຶ່ງໃນ 5 ສະໄໝໃນຊີວິດຂອງພະເຢຊູຄຣິດອີກດ້ວຍ. ທ່ານທີ່ຮັກໃນອົງພະເຢຊູຄຣິດ ຂໍໃຫ້ພວກເຮົາເລີ້ມຕົ້ນຮຽນການໃຊ້ວິທີປຽບທຽບໃນການສຶກສາພະຄຳພີໂດຍການສຶກສາຂໍ້ຄວາມໃດຂໍ້ຄວາມໜຶ່ງໃນພະຄຳພີ. ເຮົາຈະເລີ້ມຕົ້ນຮຽນຂໍ້ຄວາມໃດຂໍ້ຄວາມໜຶ່ງໂດຍວິທີໃດ? _____

**7** ບາດນີ້ເຮົາຈະຍົກເອົາຂໍ້ຄວາມມາປຽບທຽບປະການໜຶ່ງຄື "ພັກຊາດນິຍົມ" ແມ່ນສາວົກຄົນໃດທີ່ເຄີຍຢູ່ນຳພັກຊາດ ນິຍົມ? ________________________________________

**8** ຄຳວ່າ "ພັກຊາດນິຍົມ" ເປັນພາສາລາວທີ່ແປເອົາຕາມຄວາມໝາຍ. ແຕ່ໃນພາສາ ກະລີກເຂົາເຄີຍໃຊ້ຄຳ "ເຊໂລເຕ" ໃຫ້ທ່ານປຽບທຽບ ມັດທາຍ 10:4 ແລະ ລູກາ 6:15.

ກ. ແມ່ນຂ່າວປະເສີດເຫຼັ້ມໃດ ທີ່ແປຄວາມນັ້ນມາເປັນພາສາລາວ? ________________

ຂ. ເຫຼັ້ມໃດ ທີ່ຂຽນອອກຕາມພາສາກະລີກ? ________________________________

**9** ກ. ຕາມພາສາກະລີກ ຊີໂມນເຄີຍຢູ່ນຳພັກໃດ? ________________________________

ຂ. ໃນພາສາລາວ ພັກນັ້ນເປັນພັກໃດ? ____________________________________

ຕອບ:

**4** *ປຽບທຽບ*

**5** *ປຽບທຽບ 4 ເຫຼັ້ມ*

**6** *ປຽບທຽບ*

**7** *ຊີໂມນ*

**8** *ກ. ມັດທາຍ* *ຂ. ລູກາ*

**9** *ກ. ເຊໂລເຕ* *ຂ. ພັກຊາດນິຍົມ*

**10** ໃນການຮຽນກ່ຽວກັບພັກຂອງຊີໂມນທີ່ເຮົາຍົກມາຈາກຂ່າວປະເສີດສອງເຫຼັ້ມນີ້ ເຮົາໃຊ້ວິທີຮຽນແບບໃດ? (ໃຫ້ໝາຍເອົາຂໍ້ທີ່ເຫັນວ່າຖືກ)

ກ. ວິທີສັງເກດ ຄ. ວິທີນຳມາໃຊ້

ຂ. ວິທີອະທິບາຍ ງ. ວິທີປຽບທຽບ

**11** "ພັກຊາດນິຍົມ" ໃນພາສາກະລີກ ແປວ່າຫຍັງ? ________________________________

**12** ເພື່ອຈະຮຽນຮູ້ຄວາມໝາຍຂອງຄຳວ່າ "ເຊໂລເຕ" ທ່ານຮຽນຮູ້ຫຍັງ? (ໃຫ້ໝາຍເອົາຂໍ້ທີ່ຖືກ)

ກ. ຂໍ້ຄວາມ

ຂ. ເຫດການ

ຄ. ແຕ່ລະສະໄໝໃນຊີວິດຂອງພະອົງ

**13** ແຕ່ຫົວທີນີ້ ເຮົາໄດ້ຍົກຕົວຢ່າງທີ່ງ່າຍໃນການຮຽນໂດຍວິທີປຽບທຽບ ຕໍ່ໄປຈະໃຊ້ວິທີປຽບທຽບຢ່າງກວ້າງຂວາງກວ່າ ເກົ່າ. ເຖິງແມ່ນວ່າທ່ານບໍ່ໄດ້ສັງເກດກໍຕາມ ທ່ານເຄີຍຮຽນວິທີປຽບທຽບໃນເຫຼັ້ມທີ I ກ່ອນແລ້ວຄືທ່ານເຄີຍໃຊ້ວິທີ ປຽບທຽບຮຽນເລື່ອງ "ພັກຊາດນິຍົມ" ຄຳສັນຍາຂອງພະເຈົ້າ, ບຸດມະນຸດ, ຄຳທຳນວາຍ, ທ່ານມັດທາຍ ໆລໆ. ຍົກຕົວຢ່າງ: ໃນ ບົດທີ 16 ທີ່ເຮົາຮຽນເລື່ອງບຸດຂອງພະເຈົ້າ ເຮົາຮຽນຈາກຫຍັງ? (ໃຫ້ໝາຍເອົາຂໍ້ທີ່ຖືກ)

ກ. ຂໍ້ຄວາມ ຂ. ເຫດການ ຄ. ສະໄໝ

**14** ການຮຽນໂດຍວິທີປຽບທຽບໃຊ້ໃນການຮຽນຂໍ້ຄວາມກໍແມ່ນຢູ່ ແຕ່ຍັງໃຊ້ໃນການຮຽນເຫດການຕ່າງໆ ໃນຊີວິດຂອງ ພະເຢຊູອີກດ້ວຍ. ຍົກຕົວຢ່າງ ເລື່ອງກ່ຽວກັບຍິງຊາວຊາມາເລຍເປັນເຫດການໜຶ່ງໃນຊີວິດຂອງພະເຢຊູ ເປັນ ເລື່ອງໜຶ່ງໃນຊີວິດຂອງພະເຢຊູທີ່ຍົກມາເປັນຕອນໄດ້. (ໃນລາຍຊື່ຕໍ່ໄປນີ້ ໃຫ້ທ່ານໝາຍເອົາຂໍ້ທີ່ເປັນເຫດການໄວ້)

ກ. ບ້ານເບດເລເຮັມ

ຂ. ເລື່ອງພະກຳເນີດຂອງພະອົງ

ຄ. ພັກຊາດນິຍົມ

ງ. ເລື່ອງການສະເດັດສູ່ສະຫວັນ

ຈ. ເລື່ອງນີໂກເດມມາຫາພະອົງ

ຕອບ:

***10*** *ງ.ຖືກ*

***11*** *ເຊໂລເຕ*

***12*** *ກ.ຖືກ*

***13*** *ກ.ຖືກ*

***14*** *ຂ. ງ. ແລະ ຈ.ຖືກ*

**15** ກ. ໃຫ້ທ່ານເປີດອ່ານ ມທ 3:1-12 ມີຊື່ຫົວເລື່ອງວ່າຢ່າງໃດ? ____________________

ຂ. ໃຫ້ທ່ານອ່ານ ມທ 3:13-17 ມີຊື່ຫົວເລື່ອງວ່າຢ່າງໃດ? ______________________

ຄ. ໃຫ້ອ່ານ ມທ 4:1-11 ມີຊື່ຫົວເລື່ອງວ່າຢ່າງໃດ? __________________________

ງ. ສາມຕອນນັ້ນ ສະແດງເຫດການ ຫຼື ຂໍ້ຄວາມ? ______________________________

| ຝຶກ: ໃຫ້ທ່ານເອົາສໍສີຂຽວຂີດກ້ອງ 3 ຊື່ຫົວເລື່ອງນັ້ນ. |
|---|

**16** ບາດນີ້ເຮົາຈະປຽບເຫດການ 3 ປະການທີ່ເຫັນແລ້ວໃນຂ່າວປະເສີດມັດທາຍ ກັບເຫດການດຽວໃນຂ່າວປະເສີດເຫຼັ້ມ ອື່ນໆ ອີກ. ໃຫ້ທ່ານເປີດອ່ານ ມາລະໂກ 1:4 ຂໍ້ 9 ແລະ ຂໍ້ 12-13 ລູກາ 3:2-3 ແລະ ຂໍ້ 21 ລູກາ 4:1-2 ໃນຂ່າວປະເສີດສອງເຫຼັ້ມນີ້ (ມະລາໂກ ກັບ ລູກາ) ເຫຼັ້ມໃດແດ່ທີ່ເລົ່າເລື່ອງທັງສາມເຫດການນັ້ນ? (ເລືອກ)

ກ. ມາລະໂກເຫຼັ້ມດຽວ

ຂ. ລູກາເຫຼັ້ມດຽວ

ຄ. ທັງສອງ

ງ. ບໍ່ແມ່ນທັງສອງ

**17** ຈົ່ງຂຽນຊື່ຂອງ 3 ຫົວເລື່ອງ ທີ່ປາກົດຢູ່ໃນຂ່າວປະເສີດ 3 ເຫຼັ້ມແລກ (ມັດທາຍ ມາລະໂກ ແລະ ລູກາ) ທີ່ພວກ ເຮົາໄດ້ເຫັນແລ້ວໃນຄຳຖາມ 15 ຊຶ່ງເປັນສະໄໝທີ່ພະເຢຊູຕຽມຕົວ ລົງໃສ່ໃນບ່ອນວ່າງລຸ່ມນີ້:

ກ. ______________________________________________________________

ຂ. ______________________________________________________________

ຄ. ______________________________________________________________

**18** ຂ່າວປະເສີດ 3 ເຫຼັ້ມແລກຄ້າຍຄືກັນໃນການລາຍງານທຸກສະໄໝໃນຊີວິດຂອງພະອົງ ແຕ່ຕົວຢ່າງທີ່ເຮົາຍົກມາແລ້ວ ຈາກສະໄໝປີທີ່ພະອົງຕຽມຕົວນັ້ນ. ຂ່າວປະເສີດໂຢຮັນບໍ່ໄດ້ລາຍງານເຫດການ 3 ປະການນັ້ນດອກ ຂ່າວປະເສີດ ໂຢຮັນຍົກເລື່ອງຈາກອີກແງ່ໜຶ່ງມາ. ແມ່ນ 3 ເຫຼັ້ມໃດ ທີ່ກ່າວເລື່ອງເຫດການທັງສາມປະການນັ້ນໃນສະໄໝປີທີ່ ພະເຢຊູ ຕຽມຕົວ? ___

## ຕອບ:

**15** *ກ. ການປະກາດຂອງໂຢຮັນບັບຕິສະໂຕ ຂ. ພະເຢຊູຊົງຮັບບັບຕິສະມາ*

*ຄ. ມານທົດລອງພະເຢຊູ ງ. ເຫດການ*

**16** *ຄ.ຖືກ*

**17** *ກ. ການປະກາດຂອງໂຢຮັນບັບຕິສະໂຕ ຂ. ພະເຢຊູ ຊົງຮັບບັບຕິສະມາ*

*ຄ. ມານທົດລອງພະເຢຊູ*

**18** *ມັດທາຍ ມາລະໂກ ລູກາ*

**19** ຂ່າວປະເສີດ 3 ເຫຼັ້ມທີ່ລາຍງານເລື່ອງຄ້າຍຄືກັນໃນຊີວິດຂອງພະເຢຊູ ແມ່ນ 3 ເຫຼັ້ມໃດ? (ໃຫ້ໝາຍເອົາຂໍ້ທີ່ຖືກ)

ກ. ສາມເຫຼັ້ມແລກ

ຂ. ສາມເຫຼັ້ມກາງ

ຄ. ສາມເຫຼັ້ມສຸດທ້າຍ

**20** ຂ່າວປະເສີດ ມັດທາຍ ມາລະໂກ ລູກາ ລວມກັນເອີ້ນວ່າຢ່າງໃດ? (ໃຫ້ໝາຍເອົາຂໍ້ທີ່ຖືກ)

ກ. ສາມເຫຼັ້ມແລກ

ຂ. ສາມເຫຼັ້ມກາງ

ຄ. ສາມເຫຼັ້ມສຸດທ້າຍ

**21** ຄວາມຈິງມີຫຼາຍເລື່ອງທີ່ເປັນເລື່ອງດຽວກັນທີ່ໄດ້ຖືກບັນທຶກໄວ້ໃນ 3 ເຫຼັ້ມແລກຂອງພະຄຳພີໃໝ່. ເຖິງແມ່ນວ່າບັນດາ ເລື່ອງເຫຼົ່ານັ້ນຈະບໍ່ເໝືອນກັນທຸກຄຳເວົ້າກໍຕາມ ແຕ່ເລື່ອງເຫຼົ່ານັ້ນກໍຍັງເປັນເລື່ອງດຽວກັນເພາະຜູ້ຂຽນທັງ 3 ຄົນ ມີຈຸດປະສົງທີ່ຈະກ່າວເຖິງເລື່ອງດຽວກັນ ແຕ່ວ່າແຕ່ລະຄົນໄດ້ບອກເຖິງຂັ້ນຕອນຕ່າງໆ ຂອງເຫດການທີ່ແຕກຕ່າງກັນ ເທົ່ານັ້ນ. ດັ່ງນັ້ນເມື່ອພວກເຮົານຳເອົາເລື່ອງຕ່າງໆ ໃນພະຄຳພີໃໝ່ທັງ 3 ເຫຼັ້ມມາປຽບທຽບກັນ ພວກເຮົາກໍຈະ ເຂົ້າໃຈເຖິງເລື່ອງນັ້ນໄດ້ຢ່າງລະອຽດ. ຈົ່ງໝາຍ ໃສ່ຂ້າງໜ້າປະໂຫຍກທີ່ຖືກຕ້ອງ

____ ກ. ພະຄຳພີໃໝ່ 3 ເຫຼັ້ມແລກບໍ່ເຄີຍກ່າວເຖິງເລື່ອງດຽວກັນຈັກເທື່ອ.

____ ຂ. ໃນພະຄຳພີໃໝ່ 3 ເຫຼັ້ມແລກມີຫຼາຍເລື່ອງທີ່ເປັນເລື່ອງດຽວກັນ ແຕ່ວ່າແຕ່ລະເຫຼັ້ມໄດ້ບອກເຖິງຂັ້ນຕອນ ຕ່າງໆ ຂອງເຫດການທີ່ແຕກຕ່າງກັນ.

____ ຄ. ພະຄຳພີໃໝ່ 3 ເຫຼັ້ມແລກລ້ວນແຕ່ບອກເຖິງເລື່ອງດຽວກັນແລະເໝືອນກັນທຸກຄຳເວົ້າ.

**22** ຖ້າທ່ານຢາກເຂົ້າໃຈເລື່ອງມານທົດລອງພະເຢຊູຢ່າງລະອຽດ ທ່ານຈຳເປັນຕ້ອງປຽບທຽບພະຄຳພີສອງເຫຼັ້ມທີ່ບັນທຶກ ເລື່ອງນີ້ ຄືພະທຳມັດທາຍ ແລະ ພະທຳລູກາກໍໄດ້. ຈົ່ງອ່ານພະທຳມັດທາຍ 4:1 ແລະ ລູກາ 4:1 ແລ້ວໝາຍຂໍ້ທີ່ຖືກຕ້ອງ.

ກ. ມີແຕ່ພະທຳມັດທາຍເຫຼັ້ມດຽວທີ່ບອກເຖິງການທີ່ພະວິນຍານໄດ້ນຳພະເຢຊູເຂົ້າໄປໃນປ່າ. (ຖິ່ນທຸລະກັນດານ)

ຂ. ທັງພະທຳມັດທາຍແລະລູກາ ຕ່າງກໍບອກວ່າພະວິນຍານໄດ້ນຳພະເຢຊູເຂົ້າໄປໃນປ່າ.

ຕອບ:

**19** *ກ.ຖືກ*

**20** *ກ.ຖືກ*

**21** *ຂ.ຖືກ*

**22** *ຂ.ຖືກ*

**23** ຄຳຕອບຂອງທ່ານຖືກຕ້ອງແລ້ວ! ທັງພະທຳ ມັດທາຍ ແລະ ລູກາ ຕ່າງກໍບອກວ່າ ພະວິນຍານໄດ້ນຳພະເຢຊູຄຣິດ ເຂົ້າໄປໃນປ່າ ແຕ່ເຖິງຢ່າງໃດກໍຕາມມີພະຄຳພີພຽງເຫຼັ້ມດຽວທີ່ບອກເຮົາວ່າ ພະເຢຊູຄຣິດໄດ້ກັບຄືນແຂວງຄາລີເລ ດ້ວຍລິດແຫ່ງພະວິນຍານ. ຈົ່ງອ່ານພະທຳ ມັດທາຍ 4:11 ແລະ ລູກາ 4:13-14 ແລ້ວຕອບຄຳຖາມລຸ່ມນີ້: ແມ່ນເຫຼັ້ມໃດ ທີ່ບອກວ່າພະອົງໄດ້ກັບຄືນດ້ວຍລິດແຫ່ງພະວິນຍານ? ________________________

**24** ທ່ານໄດ້ໃຊ້ວິທີປຽບທຽບມາຮຽນເລື່ອງການທີ່ມານທົດລອງພະເຢຊູ. ເນື່ອງຈາກທ່ານໄດ້ຮຽນຮູ້ຈາກ ມັດທາຍ ແລະ ລູກາດ້ວຍ ເພາະເຫດທີ່ທ່ານໄດ້ຄົ້ນຄວ້າມາຈາກທັງສອງນັ້ນ ທ່ານຮູ້ຢູ່ແລ້ວວ່າ ພະວິນຍານໄດ້ຊົງນຳພະເຢຊູເຂົ້າໄປ ໃນປ່າ ແລະໄດ້ຊົງນຳພະອົງອອກຈາກປ່າໄປແຂວງຄາລີເລ. ທ່ານໄດ້ໃຊ້ວິທີປຽບທຽບມາຄົ້ນຄວ້າອັນໃດ? (ໃຫ້ຫມາຍເອົາຂໍ້ທີ່ຖືກ)

ກ. ຂໍ້ຄວາມໃດຫນຶ່ງ

ຂ. ເຫດການໃດຫນຶ່ງ

ຄ. ສະໄຫມໃດຫນຶ່ງໃນຊີວິດພະອົງ

**25** ມາເຖິງປະຈຸບັນນີ້ ເຮົາໄດ້ໃຊ້ວິທີປຽບທຽບມາຮຽນຮູ້ກ່ຽວກັບພັກຊາດນິຍົມ ແລະກ່ຽວກັບການທົດລອງຂອງພະເຢຊູ.

ກ. ອັນໃດເປັນເຫດການຫນຶ່ງ? ________________________

ຂ. ອັນໃດເປັນຂໍ້ຄວາມຫນຶ່ງ? ________________________

**26** ທ່ານຢ່າກັບໄປເບິ່ງຄຳຖາມໃນສ່ວນທີ່ເຮົາຮຽນວິທີປຽບທຽບນັ້ນ.

ກ. ອັນໃດເປັນຂໍ້ຄວາມຫນຶ່ງ? ________________________

ຂ. ອັນໃດເປັນເຫດການຫນຶ່ງ? ________________________

**27** ແມ່ນແທ້ທີ່ວ່າ ຂ່າວປະເສີດ ມັດທາຍ ມາລະໂກ ແລະ ລູກາ ຄ້າຍຄືກັນໃນການລາຍງານຊີວິດຂອງພະເຢຊູ. ຂ່າວ ປະເສີດ ມາລະໂກ ທັງຫມົດມີ 661 ຂໍ້. ໃນ 661 ຂໍ້ນັ້ນມີ 606 ຂໍ້ຍົກເລື່ອງທີ່ປາກົດໃຫ້ເຫັນໃນ ມັດທາຍ ແລະ ລູກາດ້ວຍ. ໃນ 661 ຂໍ້ນັ້ນ ຖ້າຈະເອົາ 606 ຂໍ້ທີ່ເຫັນໃນຂ່າວປະເສີດເຫຼັ້ມອື່ນໆ ມາລົບອອກເຫຼືອຢູ່ຈັກຂໍ້ທີ່ປາກົດ ມາໃນສະເພາະມາລະໂກເຫຼັ້ມດຽວ?

________________________

**28** ຂ່າວປະເສີດ 3 ເຫຼັ້ມແລກນັ້ນ ມີ 3 ເຫຼັ້ມໃດແດ່? ________________________

ຕອບ:

***23*** *ລູກາ*

***24*** *ຂ.ຖືກ*

***25*** *ກ. ການທົດລອງຂອງພະເຢຊູ* *ຂ. ພັກຊາດນິຍົມ*

***26*** *ກ. ພັກຊາດນິຍົມ* *ຂ. ການທົດລອງຂອງພະເຢຊູ*

***27*** *ມີ 55 ຂໍ້*

***28*** *ມັດທາຍ ມາລະໂກ ລູກາ*

**29** ຂ່າວປະເສີດ ມັດທາຍ ມາລະໂກ ແລະ ລູກາ ຄ້າຍຄືກັນແນວໃດ? ________________

**30** ຈົ່ງຂຽນຊື່ພະຄຳພີ 3 ເຫຼັ້ມ ທີ່ບັນທຶກເລື່ອງພະເຢຊູຊົງຮັບບັບຕິສະມາ ໃສ່ໃນບ່ອນວ່າງລຸ່ມນີ້:

ກ. ____________________________________________

ຂ. ____________________________________________

ຄ. ____________________________________________

**31** ຄວາມຈິງແລ້ວພວກເຮົາບໍ່ພຽງແຕ່ໃຊ້ວິທີປຽບທຽບໃນການສຶກສາບັນດາຂໍ້ຄວາມຫຼື ເລື່ອງໃດໜຶ່ງໃນພະຄຳພີເທົ່ານັ້ນ ແຕ່ພວກເຮົາຍັງສາມາດໃຊ້ວິທີນີ້ໃນການສຶກສາ 5 ສະໄໝໃນຊີວິດຂອງພະເຢຊູຄຣິດ ອີກດ້ວຍ. ພະຄຳພີ ໂຢຮັນ ແລະມາລະໂກໄດ້ບັນທຶກເລື່ອງການກຳເນີດ ແລະສະໄໝໄວເດັກຂອງພະເຢຊູຄຣິດ ຫຼືບໍ່? ____________________

**32** ຈົ່ງຂຽນຊື່ພະຄຳພີ 2 ເຫຼັ້ມທີ່ບັນທຶກເລື່ອງການກຳເນີດແລະສະໄໝໄວເດັກຂອງພະເຢຊູຄຣິດ ໃສ່ໃນບ່ອນວ່າງລຸ່ມນີ້:

ກ. ____________________________________________

ຂ. ____________________________________________

*ທ່ານທີ່ເຄົາລົບ! ວິທີປຽບທຽບເປັນວິທີທີ່ສຳຄັນຫຼາຍໃນການສຶກສາພະຄຳພີແລະເປັນປະໂຫຍດຫຼາຍສຳລັບຜູ້ທີ່ຈະຄົ້ນ ຄວ້າພະຄຳພີເພື່ອການເຜີຍແຜ່ຂ່າວປະເສີດ, ຊຶ່ງມັນເປັນການຍາກທີ່ທ່ານຈະເຂົ້າໃຈພະຄຳພີຢ່າງລະອຽດ ຫາກທ່ານ ບໍ່ຮູ້ຈັກໃຊ້ວິທີປຽບທຽບເຂົ້າໃນການສຶກສາພະຄຳພີຢ່າງດີ.*

**33** ທ່ານທີ່ຮັກໃນອົງພະເຢຊູຄຣິດ! ຖ້າໃນພະຄຳພີໃໝ່ບໍ່ມີພະທຳ ມັດທາຍ ແລະ ລູກາ ແລ້ວພວກເຮົາຈະເຂົ້າໃຈເຖິງ ຊີວິດໃນສະໄໝໄວເດັກຂອງພະເຢຊູຄຣິດ ໄດ້ບໍ່? __________

** ເອົາລະ ຕໍ່ໄປພວກເຮົາຈະມາສຶກສາວິທີລຽງລຳດັບເຫດການຕ່າງໆ ໃນພະຄຳພີດ້ວຍກັນໂດຍການໃຊ້ວິທີປຽບທຽບ.*

**34** ທ່ານຈື່ໄດ້ບໍ່ວ່າໃນເຫຼັ້ມທີ I ພວກເຮົາໄດ້ລຽງເຫດການຕ່າງໆ ໃນສະໄໝໄວເດັກຂອງພະເຢຊູຄຣິດ ໄວ້ຕາມລຳດັບ ຂອງເຫດການໂດຍການປຽບທຽບ.

ຕອບ:

| | |
|---|---|
| **29** | *ໃນການລາຍງານຊີວິດຂອງພະເຢຊູ* |
| **30** | *ກ. ມັດທາຍ ຂ. ມາລະໂກ ຄ. ລູກາ* |
| **31** | *ບໍ່ໄດ້ບັນທຶກ* |
| **32** | *ກ. ມັດທາຍ ຂ. ລູກາ* |
| **33** | *ບໍ່* |
| **34** | *ກ. ຜິດ ຂ. ຜິດ* |

*ຕົວຢ່າງ:* ພວກເຮົາໄດ້ກຳນົດເອົາການປະກາດຂອງໂຢຮັນບັບຕິສະໂຕ ເປັນເຫດການທີ່ເກີດຂຶ້ນກ່ອນການຮັບບັບຕິສະມາຂອງພະເຢຊູຄຣິດ ຖືວ່າການນັ້ນກໍຖືກຕ້ອງຕາມຄວາມເປັນຈິງຂອງເຫດການ.

ເມື່ອພວກເຮົາລຽງເລື່ອງຕ່າງໆຕາມລຳດັບຂອງເຫດການ ພວກເຮົາເອີ້ນສິ່ງນັ້ນວ່າ "ການລຽງເຫດການຕາມລຳດັບເວລາ". ໃນ 3 ຂໍ້ທີ່ຢູ່ຂ້າງລຸ່ມນີ້ ມີຂໍ້ຫນຶ່ງທີ່ເຫດການຕ່າງໆ ໄດ້ຖືກລຽງໄວ້ຕາມລຳດັບຂອງເຫດການຢ່າງຖືກຕ້ອງ ແລະອີກສອງຂໍ້ເຫດການຕ່າງ ໆໄດ້ຖືກລຽບລຽງໄວ້ໃນບ່ອນທີ່ບໍ່ຖືກລຳດັບ. (ຈົ່ງຫມາຍ x ໃສ່ຂໍ້ທີ່ເຫດການຕ່າງໆ ໄດ້ຖືກລຽງໄວ້ໃນບ່ອນທີ່ຜິດ)

____ ກ. ພາພະກຸມມານຫນີໄປທີ່ປະເທດເອຢິບ ການກຳເນີດຂອງພະເຢຊູຄຣິດ ການປະກາດຂອງເທວະດາເລື່ອງພະກຳເນີດ

____ ຂ. ການກຳເນີດຂອງພະເຢຊູຄຣິດ ພາພະກຸມມານຫນີໄປທີ່ປະເທດເອຢິບ ການປະກາດຂອງເທວະດາເລື່ອງພະກຳເນີດ

____ ຄ. ການປະກາດຂອງເທວະດາເລື່ອງພະກຳເນີດ ການກຳເນີດຂອງພະເຢຊູຄຣິດ ພາພະກຸມມານຫນີໄປທີ່ປະເທດເອຢິບ

**35** ຈົ່ງຫມາຍ √ ໃສ່ຂ້າງຫນ້າປະໂຫຍກທີ່ຖືກຕ້ອງ. *ການລຽງເຫດການຕາມລຳດັບເວລາແມ່ນ:

____ ກ. ລຽງເຫດການຕ່າງໆ ຕາມລຳດັບຄວາມສຳຄັນຂອງເຫດການ

____ ຂ. ລຽງເຫດການຕາມລຳດັບຄວາມເປັນຈິງຂອງເຫດການທີ່ໄດ້ເກີດຂຶ້ນ

____ ຄ. ລຽງເຫດການຕ່າງໆ ໄດ້ຕາມໃຈມັກ

**36** ຈົ່ງອ່ານແລະສັງເກດເລື່ອງຕ່າງໆ ທີ່ໄດ້ຖືກລຽງໄວ້ຂ້າງລຸ່ມນີ້ ຢ່າງເອົາໃຈໃສ່ ແລ້ວຕອບຄຳຖາມລຸ່ມນີ້: ເລື່ອງຕ່າງໆ ທີ່ໄດ້ຖືກລຽງໄວ້ຂ້າງລຸ່ມນີ້ ຖືກຕ້ອງຕາມລຳດັບຂອງເຫດການແລ້ວບໍ່? ______________________________________________

1. ເທວະດາໄດ້ປາກົດແກ່ມາລີອາ
2. ມາລີອາໄປຢ້ຽມຢາມເອລີຊາເບັດທີ່ແຂວງຢູດາ
3. ເທວະດາປາກົດແກ່ໂຢເຊັບໃນຄວາມຝັນແລະບອກເຖິງຄວາມຈິງກ່ຽວກັບການຕັ້ງທ້ອງຂອງມາລີອາ.
4. ການກຳເນີດຂອງພະເຢຊູຄຣິດ ແລະການເຂົ້າເຝົ້າຂອງຄົນລ້ຽງແກະທີ່ບ້ານເບດເລເຮັມ.
5. ໂຢເຊັບແລະມາລີອາພາພະກຸມມານເດີນທາງໄປນະຄອນເຢລູຊາເລັມຄັ້ງທຳອິດ. (ລູກາ 2:22)
6. ພວກໂຫຮາຈານເຂົ້າເຝົ້າທີ່ບ້ານເບດເລເຮັມ
7. ໂຢເຊັບແລະມາລີອາພາພະເຢຊູຫນີໄປຢູ່ປະເທດເອຢິບ

ຕອບ:

***35*** *ຂ.ຖືກ*

***36*** *ຖືກຕ້ອງແລ້ວ*

8. ກະສັດເຮໂລດສັ່ງຂ້າເດັກນ້ອຍທຸກຄົນທີ່ມີອາຍຸແຕ່ສອງປີລົງມາ
9. ໂຢເຊັບແລະມາລີອາພາພະເຢຊູເດີນທາງໄປນະຄອນເຢລູຊາເລັມໃນເວລາທີ່ພະເຢຊູ ມີອາຍຸໄດ້ 12 ປີ. ຫຼັງຈາກທີ່ທ່ານຕອບຄຳຖາມແລ້ວ ຈົ່ງກວດຄືນເບິ່ງວ່າຄຳຕອບຂອງທ່ານຖືກຕ້ອງຕາມຄຳຕອບທີ່ຢູ່ຂ້າງລຸ່ມນີ້ຫຼືບໍ່ ຖ້າຫາກຜິດຈົ່ງອ່ານຊື່ເລື່ອງຕ່າງໆ ນັ້ນຄືນອີກແລ້ວພິຈາລະນາຄຳຕອບຂອງທ່ານຄືນໃຫມ່.

**37** ເລື່ອງຕ່າງໆ ທີ່ຢູ່ຂ້າງລຸ່ມນີ້ໄດ້ຖືກລຽງໄວ້ໃນລຳດັບທີ່ບໍ່ຖືກຕ້ອງ ດັ່ງນັ້ນຈົ່ງລຽງເລື່ອງຕ່າງໆ ເຫຼົ່ານີ້ຄືນໃຫມ່ອີກໂດຍ ໃຫ້ຖືກຕ້ອງຕາມລຳດັບຂອງເຫດການໂດຍໃຊ້ເລກ 1, 2, 3 ເປັນເຄື່ອງຫມາຍຊຶ່ງໃນນັ້ນເລກ 1 ຫມາຍເຖິງເຫດ ການທຳອິດ ເລກ 2 ຫມາຍເຖິງເຫດການທີສອງ ແລະເລກ 3 ຫມາຍເຖິງເຫດການທີສາມ.

ກ. _________ ເທວະດາປາກົດແກ່ມາລີອາ

ຂ. _________ ເທວະດາປາກົດແກ່ໂຢເຊັບໃນຄວາມຝັນ

ຄ. _________ ມາລີອາໄປຢ້ຽມຢາມເອລີຊາເບັດ

**38** ຈົ່ງລຽງເລື່ອງຕ່າງໆ ດັ່ງລຸ່ມນີ້ໃຫ້ຖືກຕ້ອງຕາມລຳດັບຂອງເຫດການໂດຍໃຊ້ຫມາຍເລກ 1,2,3 ເປັນສັນຍາລັກເຖິງ ລຳດັບຂອງເຫດການເຫມືອນດັ່ງໃນຄຳຖາມ 26.37

ກ. _________ ໂຢເຊັບແລະມາລີອາພາພະກຸມມານຫນີໄປປະເທດເອຢິບ

ຂ. _________ ໂຢເຊັບແລະມາລີອາພາພະເຢຊູເດີນທາງໄປກຸງເຢລູຊາເລັມ (ເມື່ອພະເຢຊູມີອາຍຸໄດ້ 12 ປີ)

ຄ. _________ ພວກໂຫຣາຈານເຂົ້າເຝົ້າທີ່ບ້ານເບດເລເຮັມ

**39** ເພື່ອໃຫ້ຖືກຕ້ອງຕາມພະບັນຍັດຂອງພະຜູ້ເປັນເຈົ້າໄດ້ຂຽນໄວ້ວ່າ ຫຼັງຈາກກຳເນີດ 33 ມື້ ຜູ້ຍິງທຸກຄົນຕ້ອງຢູ່ແຕ່ໃນ ເຮືອນ ດັ່ງນັ້ນ ມາລີອາຈຳຕ້ອງຢູ່ແຕ່ພາຍໃນບ້ານ. ອີກຈັກວັນກ່ອນທີ່ຈະເຖິງວັນກຳນົດທີ່ຈະທຳພິທີຊຳຮະຕົວຫຼັງຈາກ ເກີດລູກ? (ຈົ່ງເລືອກເອົາຂໍ້ທີ່ຖືກ)

ກ. ມື້ນຶ່ງ

ຂ. ປີນຶ່ງ

ຄ. 33 ວັນ

**40** ຈົ່ງອ່ານເລື່ອງເລົ່ານີ້ແລ້ວຫມາຍເລກ 1 ໃສ່ເຫດການທີ 1 ເລກ 2 ໃສ່ເຫດການທີ 2 ແລະເລກ 3 ໃສ່ເຫດການ ທີສາມ.

ກ. ___________ ພວກໂຫຣາຈານເຂົ້າເຝົ້າທີ່ບ້ານເບດເລເຮັມ

ຕອບ:

| | | | |
|---|---|---|---|
| ***37*** | *ກ. 1* | *ຂ. 3* | *ຄ. 2* |
| ***38*** | *ກ. 2* | *ຂ. 3* | *ຄ. 1* |
| ***39*** | *ຄ.ຖືກ* | | |
| ***40*** | *ກ. 2* | *ຂ. 1* | *ຄ. 3* |

ຂ. ___________ ການກຳເນີດຂອງພະເຢຊູ ແລະການເຂົ້າເຝົ້າຂອງຄົນລ້ຽງແກະ

ຄ. ___________ ມາລີອາແລະໂຢເຊັບພາພະກຸມມານໄປນະຄອນເຢລູຊາເລັມຄັ້ງທີສອງ

**41** ຄຳວ່າ "ພັກຊາດນິຍົມ" ໃນພາສາລາວ ແປມາຈາກຄຳໃດໃນພາສາກະລີກ? ___________

**42** ທ່ານທີ່ຮັກໃນອົງພະເຢຊູຄຣິດ! ມາເຖິງເວລານີ້ພວກເຮົາກໍໄດ້ຜ່ານການສຶກສາກ່ຽວກັບວິທີປຽບທຽບເຂົ້າໃນການ ສຶກສາຂໍ້ຄວາມໃດໜຶ່ງ ເຫດການໃດໜຶ່ງແລະສະໄໝໃດໜຶ່ງໃນຊີວິດຂອງພະເຢຊູຄຣິດແລ້ວ. ຈົ່ງຂຽນຊື່ຂອງສາມຕົວຢ່າງໃສ່ໃນຊ່ອງວ່າງລຸ່ມນີ້:

ກ. ພວກເຮົາໄດ້ເອົາຫົວຂໍ້ພັກ ___________________ ເປັນຕົວຢ່າງຂອງການໃຊ້ວິທີປຽບທຽບເຂົ້າໃນການສຶກສາ ຂໍ້ຄວາມໃດໜຶ່ງໃນພະຄຳພີ.

ຂ. ພວກເຮົາໄດ້ເອົາເລື່ອງ ___________________________________ ເປັນຕົວຢ່າງໃນການສຶກສາການໃຊ້ ວິທີປຽບທຽບເຂົ້າໃນການສຶກສາເລື່ອງໃດໜຶ່ງໃນພະຄຳພີ.

ຄ. ພວກເຮົາໄດ້ເອົາສະໄໝໄວ __________________ ເປັນຕົວຢ່າງໃນການສຶກສາການໃຊ້ວິທີປຽບທຽບເຂົ້າໃນ ການສຶກສາສະໄໝໃດໜຶ່ງໃນຊີວິດຂອງພະເຢຊູຄຣິດ.

*ທ່ານທີ່ຮັກໃນອົງພະເຢຊູຄຣິດ! ພະເຈົ້າ ໄດ້ປະທານຕາສອງໜ່ວຍໃຫ້ແກ່ເຮົາເພື່ອພວກເຮົາຈະສາມາດເຫັນເຖິງຄວາມສວຍງາມຂອງສິ່ງທີ່ພະອົງໄດ້ຊົງສ້າງໄວ້ຢ່າງລະອຽດ. ຖ້າວ່າຕາຂອງເຮົາບອດກໍ່າໜຶ່ງ ພວກເຮົາກໍຈະບໍ່ສາມາດເຫັນສິ່ງຕ່າງໆ ໄດ້ຢ່າງລະອຽດແລະຊັດເຈນ, ໃນທຳນອງດຽວກັນ ພະເຈົ້າໄດ້ປະທານໜັງສືຂ່າວປະເສີດເລື່ອງຂອງພະເຢຊູຄຣິດ ທັງ 4 ເຫຼັ້ມໃຫ້ແກ່ພວກເຮົາ ເພື່ອພວກເຮົາຈະສາມາດເຫັນແລະເຂົ້າໃຈເຖິງເຫດການຕ່າງໆ ໃນຊີວິດຂອງພະເຢຊູໄດ້ຢ່າງລະອຽດ ແລະພວກເຮົາກໍບໍ່ສາມາດຕັດເຫຼັ້ມໜຶ່ງເຫຼັ້ມໃດອອກໄດ້ເຊັ່ນກັນ.*

**43** ຖ້າໜັງສືຂ່າວປະເສີດເລື່ອງຂອງພະເຢຊູຄຣິດ ມີພຽງພະຄຳມັດທາຍພຽງເຫຼັ້ມດຽວ ຈະມີຫຍັງເກີດຂຶ້ນ? (ຈົ່ງເລືອກເອົາຂໍ້ທີ່ເຫັນວ່າຖືກ)

ກ. ພວກເຮົາຈະບໍ່ສາມາດເຂົ້າໃຈເຖິງເລື່ອງຂອງພະເຢຊູຄຣິດຢ່າງລະອຽດ.

ຂ. ເພາະມີຫຼາຍເລື່ອງໃນພະຄຳພີ 4 ເຫຼັ້ມແລກຂອງພະຄຳພີໃໝ່ທີ່ເປັນເລື່ອງດຽວກັນ, ສະນັ້ນເຖິງແມ່ນວ່າຈະມີ ພະທຳມັດທາຍພຽງເຫຼັ້ມດຽວ ແຕ່ພວກເຮົາກໍຍັງສາມາດເຂົ້າໃຈເຖິງເລື່ອງຂອງພະເຢຊູຄຣິດໄດ້ຢ່າງລະອຽດ.

**44** ຈົ່ງຕື່ມຄວາມເວົ້າທີ່ຖືກຕ້ອງໃສ່ໃນບ່ອນວ່າງລຸ່ມນີ້: ໃນບົດຮຽນທີ 1 ນີ້ ພວກເຮົາໄດ້ສຶກສາການໃຊ້ວິທີ _____________ ເຂົ້າໃນການສຶກສາພະຄຳພີ.

ຕອບ:

***41*** *ເຊໂລເຕ*

***42*** *ກ. ຊາດນິຍົມ* *ຂ. ມານທົດລອງພະເຢຊູ* *ຄ. ສະໄໝໄວເດັກ*

***43*** *ກ.ຖືກ*

***44*** *ປຽບທຽບ*

**45** ຈິງແທ້ ພະເຈົ້າໄດ້ປະທານຂ່າວປະເສີດ 4 ເຫຼັ້ມທີ່ບັນທຶກກ່ຽວກັບຊີວິດພະເຢຊູຄຣິດໃຫ້ແກ່ພວກເຮົາ. ເພື່ອພວກເຮົາ ຈະໄດ້ຮັບປະໂຫຍດຈາກຂ່າວປະເສີດ 4 ເຫຼັ້ມນັ້ນ ໂດຍການປຽບທຽບທັງ 4 ເຫຼັ້ມນັ້ນດ້ວຍກັນ. ຈາກທັງ 4 ເຫຼັ້ມ ນັ້ນ ຄຣິສຕຽນກໍສາມາດເຫັນແລະເຂົ້າໃຈເຖິງຊີວິດແລະການປະກາດຂອງພະເຢຊູຄຣິດ ໄດ້ຢ່າງທີ່ຖ້ວນ ຊຶ່ງຈຸດປະສົງ ທີ່ສຳຄັນຂອງຫຼັກສູດນີ້ ກໍເພື່ອຈະຊ່ວຍໃຫ້ທ່ານສາມາດໃຊ້ການປຽບທຽບເຂົ້າໃນການສຶກສາພະຄຳພີໄດ້ຢ່າງຄ່ອງແຄ້ວ ແລະມີປະສິດທິພາບ. ຖ້າມີຂ່າວປະເສີດເຫຼັ້ມດຽວຈະໃຊ້ວິທີຮຽນດ້ວຍການປຽບທຽບໄດ້ບໍ່? ____________________________________________

**46** ຖ້າເຮົາເຫັນສິ່ງໃດສິ່ງໜຶ່ງຈາກຫຼາຍແງ່ ເຮົາກໍຮູ້ເລື່ອງຢ່າງລະອຽດເຊັ່ນດຽວກັນ ຖ້າມີຄົນຜູ້ດຽວລາຍງານເລື່ອງ ຊີວິດຂອງພະເຢຊູ ຄືວ່າເຮົາຈະຮຽນຮູ້ຈາກແງ່ດຽວ. ມີຜູ້ລາຍງານຊີວິດຂອງພະເຢຊູ ຈັກຄົນ? ______________ ດັ່ງນັ້ນເຮົາຈະສຶກສາກ່ຽວກັບຊີວິດຂອງພະອົງ ດ້ວຍວິທີໃດ? ____________________________________________

*ຂໍໃຫ້ທ່ານໄດ້ກົ້ມຫົວຫຼັບຕາອ້ອນວອນຂໍການຊົງນຳຈາກພະເຈົ້າ ໃນການຈະສຶກສາບົດຮຽນຕໍ່ໄປ ແລະຢ່າລືມຂອບພະຄຸນພະເຈົ້າ ທີ່ພະອົງໄດ້ຊົງນຳທ່ານໃນການສຶກສາຮໍ່າຮຽນ ບົດທີ 1 ຜ່ານມາ.*

ຕອບ:

**45** *ບໍ່*

**46** *4 ຄົນ;* *ວິທີປຽບທຽບ*